ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 018 /ສພທ.ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ 10/09/2019

# ມະຕິ

## ກອງປະຊຸມສະພາບໍລິຫານ ທຄຕລ ສະໄຫມວິສາມັນ ຄັ້ງທີ 3 ປະຈໍາປີ 2019, ວັນທີ 10/09/2019

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄຫມວິສາມັນ ຄັ້ງທີ 3 ປະຈໍາປີ 2019 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 9:30 ໂມງ ຂອງວັນທີ 10/09/2019 ທີ່ສໍານັກງານໃຫຍ່ ທຄຕລ ໂດຍ ການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງໃນບັນຫາສໍາຄັນຕ່າງໆ ດັ່ງນີ້:**

1. ຮັບຮອງຜົນການທົບທວນຖານະການເງິນຂອງ ທຄຕລ ແບບສະເພາະກິດຈະການ ແລະ ສັງລວມກິດຈະການ ປະຈໍາ 6 ເດືອນ ປີ 2019 ຈາກບໍລິສັດກວດສອບພາຍນອກ ຕາມມາດຖານບັນຊີລາວ ແລະ IFRS.
2. ຮັບຮອງການປ່ອຍກູ້ທີ່ຂຶ້ນກັບສິດຂອງສະພາບໍລິຫານຈໍານວນ 2 ລາຍການ.
3. ຮັບຮອງວິທີການມອບເງິນຊ່ວຍເຫຼືອທີ່ລະດົມໄດ້ຈາກສັງຄົມໃນໂຄງການ BCEL OneHeart ໃຫ້ຜູ້ປະສົບໄພຢູ່ແຂວງອັດຕະປືໃນປີ 2018.
4. ຮັບຮອງການປັບປຸງກໍານົດການຈັດກອງປະຊຸມຂອງຄະນະກໍາມະການສະພາບໍລິຫານ: ຄະນະກໍາມະການກວດສອບ ແລະ ຄະນະກໍາມະການຄຸ້ມຄອງບໍລິຫານ.

ກອງປະຊຸມ ໄດ້ປິດລົງໃນເວລາ 12:00 ໂມງຂອງວັນດຽວກັນ

**ປະທານສະພາບໍລິຫານ**

ປອ. ບຸນເຫຼືອ ສິນໄຊວໍຣະວົງ